# ກຸ່ມຄຸ້ມຄອງເຄື່ອງປ່າຂອງດົງ ບ້ານນ້ຳແພງ

## Namphaeng NTFPs Management Group

### ຂໍ້ມູນທົ່ວໄປ:

ທີ່ຕັ້ງ: ບ້ານນ້ຳແພງ, ເມືອງນາໝໍ້, ແຂວງອຸດົມໄຊ
ສ້າງຕັ້ງ: ປີ 1997
ສະມາຊິກ: 123 ຄົນ, ຍິງ 76 ຄົນ, 88 ຄອບຄົວ
ຜະລິດຕະພັນ: ໜໍ່ຂົມ ແລະ ໝາກແໜ່ງ

### ລະບົບການຄຸ້ມຄອງປ່າໜໍ່ຂົມ:

- ເປີດປ່າແມ່ນວັນທີ 5 ທັນວາ ແລະ ປິດປ່າວັນທີ 20 ມີນາ. ໃນຊ່ວງປິດປ່າແມ່ນຫ້າມຫາໜໍ່ມາຂາຍ ແຕ່ຫາເພື່ອກິນເອງໄດ້.
- ຫ້າມນຳໃຊ້ເຄື່ອງມືທີ່ທຳລາຍໜໍ່ເຊັ່ນ: ຈົກ. ອານຸຍາດໃຫ້ໃຊ້ ແວກ ໃນການຂຸດຫາໜໍ່.







### ລະບົບການຕະຫຼາດ:

- ສະມາຊິກຕ້ອງມາຂາຍໃຫ້ກຸ່ມເທົ່ານັ້ນ ເຊິ່ງກຸ່ມຈະຂາຍຕໍ່ໃຫ້ແກ່ພໍ່ຄ້າແມ່ຄ້າ.
- ກຸ່ມຈະຫັກເງິນຈຳນວນ 300 ກີບ/ກິໂລ ຈາກສະມາຊິກເຂົ້າກອງທຶນກຸ່ມ.
- ກຸ່ມຈະເລືອກພໍ່ຄ້າເພື່ອມາເກັບຊື້ ໂດຍຈະເລືອກປູ້ທີ່ໃຫ້ລາຄາສູງກວ່າໝູ່ ແລະ ໄປສະດວກມາສະດວກ.
- ພໍ່ຄ້າຈະໃຫ້ເງິນລ່ວງໜ້າແກ່ກຸ່ມເພື່ອຊື້ໜໍ່ຂົມກັບສະມາຊິກ.




**ຕົວຢ່າງ**: ສະມາຊິກຂາຍໃຫ້ກຸ່ມລາຄາ 5,000ກີບ, ຈາກນັ້ນກຸ່ມຂາຍໃຫ້ພໍ່ຄ້າ 5,300ກີບ. ພໍ່ຄ້າເອົາໄປຂາຍຕໍ່ທີ່ຕະຫຼາດຢູ່ບໍ່ແກ້ວ (ຂາຍຍົກ) ລາຄາ 6,800ກີບ.

### ຈຸດດີຂອງກຸ່ມ:

- ປ່າໜໍ່ຂົມອຸດົມສົມບູນຄືເກົ່າ ຍ້ອນມີການປົກປັກຮັກສາ.
- ກຸ່ມມີກອງທຶນໃນການເບິ່ງແຍງກັນ ແລະ ກັນ.
- ສະມາຊິກຂາຍໜໍ່ສະດວກສະບາຍ ແລະ ໄດ້ລາຄາດີ.




ຈັດຕັ້ງປະຕິບັດໂດຍ:
Organized by:

ສະໜັບສະໜູນໂດຍ:
Supported by: